ຂ່າວ news

BOL.ODX

ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ

Tel: 081 260009; 212549. Fax: 081 212551

Website: www.bol.gov.la/Oudomxay/




# ລູກຄ້າ 4 ແຂວງພາກເໜືອ ຮັບຜົນກະທົບຈາກໂຄວິດ 30 ຕື້ກີບ




ທ່ານ ພອນສະຫວັນ ຄໍາພາວົງ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ (ທຫລ) ພາກເໜືອ ແຂວງອຸດົມ ໄຊ ໄດ້ແຈ້ງຕໍ່ຜູ້ສື່ຂ່າວ ທຫລ ວ່າ: ສາຂາ ທຫລ ພວກເຮົາ ໄດ້ຄຸ້ມຄອງມະຫາພາກດ້ານເງິນຕາ-ສິນເຊື່ອໃນຂອບເຂດ ແຂວງອຸດົມໄຊ, ບໍ່ແກ້ວ, ຫຼວງນໍ້າທາ ແລະແຂວງຜົ້ງສາລີ ໂດຍສະເພາະຄຸ້ມຄອງ, ຕິດຕາມ-ກວດກາບັນດາສາຂາ ແລະ ໜ່ວຍບໍລິການ ທະນາຄານທຸລະກິດ ລັດ-ເອກະຊົນ ແລະ ສະເພາະກິດ ມີທັງໝົດ 19 ສາຂາ ແລະ 11 ໜ່ວຍບໍລິການທະນາຄານຕ່າງປະເທດ-ເອ ກະຊົນ.

**ການເຄື່ອນໄຫວຂອງທະນາຄານທຸລະກິດໃນ 4 ແຂວງ ມາຮອດເດືອນ ພະຈິກ** 2020 ມີຍອດເຫຼືອຊັບສິນທັງໝົດ 6.862,50 ຕື້ກີບ ເພີ່ມຂຶ້ນ 16,63% ທຽບໃສ່ທ້າຍປີ 2019; ມີຍອດເຫຼືອສິນເຊື່ອທັງໝົດ 2.449,04 ຕື້ກີບ ຫຼຸດລົງ 4,62% ເມື່ອທຽບໃສ່ທ້າຍປີ 2019. ມີຍອດເຫຼືອເງິນຝາກທັງໝົດ 6.246,12 ຕື້ກີບ ກວມ 88,17% ຂອງໜີ້ສິນທັງໝົດ; ໃນໄລຍະດັ່ງກ່າວ, ຍັງ**ຮັບຜົນກະທົບຈາກການແຜ່ລະບາດພະຍາດໂຄວິດ**-19 **ໃນຂົງເຂດ** 4 **ແຂວງພາກເໜືອຕອນເທິງ ໂດຍສະ ເພາະລູກຄ້າຂອງທະນາຄານທຸລະກິດໄດ້ຮັບຜົນກະທົບໂດຍທາງກົງ ແລະ ທາງອ້ອມ.**

ມາຮອດທ້າຍເດືອນ ພະຈິກ 2020 ໃນຂົງເຂດ 4 ແຂວງພາກເໜືອ ມີລູກຄ້າສິນເຊື່ອທີ່ໄດ້ຮັບຜົນກະທົບຈາກ ການແຜ່ລະບາດຂອງພະຍາດດັ່ງກ່າວ120 ລາຍລວມມູນຄ່າ 29,96 ຕື້ກີບ; ໃນນີ້ຂະແໜງກໍ່ສ້າງ 2 ລາຍ ກວມເອົາ 10,43%, ຂະແໜງປະກອບວັດຖຸ-ເຕັກນິກ 10 ລາຍ ກວມເອົາ 6,83%, ຂະແໜງກະສິກຳ-ປ່າໄມ້ 94 ລາຍ ກວມເອົາ 70,43%, ຂະ ແໜງການຄ້າ 10 ລາຍ ກວມເອົາ 6,76%, ຂະແໜງຂົນສົ່ງ-ໄປສະນີ 1 ລາຍ ກວມເອົາ 1,34% ແລະ ຂະແໜງບໍລິການ 3 ລາຍ ກວມເອົາ 4,20% ຂອງສິນເຊື່ອທີ່ໄດ້ຮັບຜົນກະທົບທັງໝົດ.

ຕໍ່ບັນຫາດັ່ງກ່າວນີ້; ທ່ານຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ ໄດ້ແຈ້ງໃຫ້ເຫັນເຖິງ**ການຈັດ ຕັ້ງປະຕິບັດນະໂຍບາຍສິນເຊື່ອຕໍ່ລູກຄ້າ ໂດຍໃຫ້ທະນາຄານທຸລະກິດ** ປະຕິບັດນະໂຍບາຍ ຫຼື ປະຕິບັດການເລື່ອນກຳນົດເວລາຊຳ ລະຕົ້ນທຶນ ແລະ ດອກເບ້ຍໃຫ້ກັບລູກຄ້າ 119 ລາຍ, ລວມມູນຄ່າ 30,52 ຕື້ກີບ; ການປັບຫຼຸດອັດຕາດອກເບ້ຍ ,ຄ່າທຳນຽມ ໃຫ້ກັບລູກຄ້າ 6 ລາຍ, ລວມມູນຄ່າ 16,68 ຕື້ກີບ; ຍົກເວັ້ນຄ່າປັບໄໝລູກຄ້າທີ່ຄ້າງຊຳລະໃຫ້ກັບລູກຄ້າ 20 ລາຍ, ລວມມູນ ຄ່າ 256 ລ້ານກີບ; ການປ່ອຍເງິນກູ້ບ້ວງໃໝ່ ຜູ້ທີ່ໄດ້ຮັບຜົນກະທົບຈາດການລະບາດພະຍາດໃຫ້ກັບລູກຄ້າ 1 ລາຍ, ລວມມູນ ຄ່າ 500 ລ້ານກີບ.

ໃນຜ່ານມາ ສາມາດສະຫຼຸບໄດ້ດ້ານດີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກບາງດ້ານ **ຕໍ່ກັບຜົນກະທົບຈາກການແຜ່ລະ ບາດຂອງພະຍາດ** Covid-19 **ສະເພາະຂໍ້ສະດວກ** ຍ້ອນມີແນວທາງນະໂຍບາຍ, ມາດຕະການ ແລະ ວິທີໃນການຊ່ວຍຜ່ອນຜັນ ຕໍ່ກັບບັນດາປັດໃຈທີ່ໄດ້ຜົນກະທົບຈາກການແຜ່ລະບາດຂອງພະຍາດ Covid-19 ຈາກພັກ-ລັດກໍ່ຄື ທຫລ ວາງອອກແຕ່ລະໄລ ຍະ ເປັນຕົ້ນແມ່ນນະໂຍບາຍສິນເຊື່ອ ແລະ ໂຄງການສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ເພື່ອແກ້ໄຂຜົນກະທົບຈາກການແຜ່ ລະບາດຂອງພະຍາດ Covid-19; ພ້ອມນັ້ນ, ທະນາຄານທຸລະກິດ ໄດ້ຮັບຄວາມເອົາໃຈໃສ່ໃນການຊີ້ນຳນຳພາຢ່າງໃກ້ສິດຈາກ ຄະນະອຳນວຍການ ກໍ່ຄືຄະນະສາຂາ; ນອກນີ້ ກໍ່ຍ້ອນມີນະໂຍບາຍ, ແຈ້ງການ ແລະ ບົດແນະນຳ ທີ່ກຳນົດໂດຍສຳນັກງານໃຫຍ່ ຂອງທະນາຄານທຸລະກິດ ເຮັດໃຫ້ບັນດາສາຂາ ແລະ ໜ່ວຍບໍລິການ ໃນຂອບເຂດ 4 ແຂວງພາກເໜືອ ສາມາດນຳມາຈັດຕັ້ງ ປະ ຕິບັດໄດ້ທັນກັບສະພາບ ແລະ ມີຄວາມສອດຄ່ອງ, ຮັດກຸມ, ເຂັ້ມງວດ; ຍ້ອນພະນັກງານຢູ່ບັນດາສາຂາ ແລະ ໜ່ວຍບໍລິການ ຂອງທະນາຄານທຸລະກິດ ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນການຕິດຕາມ, ກວດກາ, ທົບທວນ ແລະ ເກັບກຳຂໍ້ມູນ ເພື່ອ ສະຫຼຸບສັງລວມລາຍງານຍັງສຳນັກງານໃຫ້ຕົນ ແລະ ສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ ຮັບຊາບຢ່າງເປັນປົກກະຕິ.

**ໃນຂະນະດຽວກັນນັ້ນ; ກໍ່ຍັງມີຂໍ້ຫຍຸ້ງຍາກ** ເວົ້າສະເພາະໃນໄລຍະການສັ່ງໂຈະຊົ່ວຄາວກ່ຽວກັບການເດີນທາງລະຫວ່າງ ທ້ອງຖິ່ນກໍ່ຄືບ້ານ, ເມືອງ, ບາງແຂວງ ແລະ ຕ່າງປະເທດ ຊຶ່ງໄດ້ສົ່ງຜົນເຮັດໃຫ້ການລົງຕິດຕາມ, ກວດກາ, ທົບທວນ ຢ່າງເປັນ ປົກກະຕິ-ຕໍ່ເນື່ອງຂອງທະນາຄານທຸລະກິດ ບໍ່ໄດ້ປະຕິບັດຢ່າງເປັນປົກກະຕິ-ຕໍ່ເນື່ອງ, ພ້ອມນີ້ຍັງສົ່ງຜົນເຮັດໃຫ້ການຂົນສົ່ງສິນຄ້າ ຖືກຢຸດສະງັກເປັນບາງໄລຍະ-ຊົ່ວຄາວ; ລູກຄ້າບາງລາຍທີ່ສະເໜີຂໍການປະຕິບັດນະໂຍບາຍຈາກທະນາຄານທຸລະກິດ ບາງສາຂາ ຈຳນວນໜຶ່ງແມ່ນມີເງື່ອນໄຂຍັງບໍ່ທັນຄົບຖ້ວນ ຫຼື ພຽງພໍ ແລະ ບາງລາຍລູກຄ້າທຸລະກິດບໍ່ມີຕົວຕົນ; ການເຄື່ອນໄຫວສິນເຊື່ອ ໃນປະຈຸບັນກໍ່ພົບບັນຫາຫຼາຍໃນການຊຳລະຕົ້ນທຶນ ແລະ ດອກເບ້ຍ ເນື່ອງຈາກກິດຈະການຫຼາຍຢ່າງໄດ້ຮັບຜົນກະທົບເປັນຕົ້ນ: ບ້ານພັກ, ໂຮງແຮມ, ຮ້ານອາຫານ ແລະ ຮ້ານກິນດື່ມໄດ້ສັ່ງໂຈະຊົ່ວຄາວເປັນບາງໄລຍະ ເຮັດໃຫ້ລູກຄ້າບາງລາຍບໍ່ມີລາຍຮັບ ຈາກກິດຈະການຕ່າງໆ ເພື່ອມາຊຳລະໜີ້ສິນຄືນໃຫ້ທະນາຄານ.

**# ຂ່າວ: ຮັດສະໝີ ດວງສັດຈະ**

**# ພາບ: ສົມພິດ ທຳມະວົງ**